# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 31 ພຶສພາ 2020 (05-31-2020)

---

**ຍອມຮັບ**

*ທ່ານຈະຕັດສິນໃຈຢ່າງໃດວ່າແມ່ນຫຍັງທີ່ບໍ່ມີຄ່າຄວນແກ່ການຖົກຖຽງກັນ?*

**ຈຸດສຳຄັນໃນບົດຮຽນ:** ຄວາມສັມພັນທີ່ແໜ້ນແກ່ນ ຈະບໍ່ຖືກກີດກັ້ນ ດ້ວຍຄວາມຄິດເຫັນທີ່ແຕກຕ່າງກັນ.
**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃນໂລກທີ່ສົມບູນແບບນັ້ນ, ທຸກຄົນຄືຊິເຫັນພ້ອມກັບຂ້ອຍ, ທຸກຄົນຄືຊິອົບຮົມລູກຄືກັນກັບຂ້ອຍ, ທຸກຄົນຄືຊິປ່ອນບັດເອົາຜູ້ສມັກທີ່ຂ້ອຍເຫັນພ້ອມ. ແລະທຸກຄົນຄືຊິໃຊ້ເງິນດັ່ງດຽວກັບຂ້ອຍໃຊ້ເງິນຂ້ອຍ.

ໂລກທີ່ປະຫຼາດຈະເປັນແບບໃດຖ້າທຸກຄົນເລີ່ມອ່ານປຶ້ມເຫຼັ້ມດຽວກັນ, ກັບເຫຼັ້ມທີ່ຂ້ອຍມີຢູ່ໃນມື! ແຕ່ໃນຄວາມເປັນຈິງ, ພວກເຮົາຈະບໍ່ເຫັນໃນມູມມອງດຽວກັນສເມີໄປ. ຄຳຖາມແຕ່ລະຄົນແມ່ນ: ພວກເຮົາຈະເຮັດຈັ່ງໃດໃນເມື່ອພວກເຮົາບໍ່ເຫັນພ້ອມກັນ? ພວກເຮົາຫຼາຍຄົນໃຊ້ເວລາຫຼວງຫຼາຍຊັກຊວນ-ພະຍາຍາມລວມເອົາຄົນ "ຕາບອດ" ຕິດຕາມຄວາມຄິດເຫັນຂອງເຮົາ. ແຕ່ ຈະເປັນຢ່າງໃດຖ້າຄວາມພຍາຍາມນັ້ນໃຊ້ການບໍ່ໄດ້? ຈະມີຫຍັງເກີດຂຶ້ນຫາກວ່າທ່ານເວົ້າຈົນໜ້າດຳຕາແດງ ແຕ່ຄົນອື່ນຍັງຢືນຢັດຢູ່ໃນຈຸດຢືນຂອງລາວ? ຄວາມສັມພັນຕ້ອງຂາດສະບັ້ນລົງຫຼື?

ໃນພຣະທັມໂຣມ, ທ່ານໂປໂລໄດ້ສອນເຮົາໃຫ້ຮັກສາຄວາມຖ່ອມຕົວໄວ້ໃນເວລາເຮົາມີຄວາມຄິດເຫັນຕ່າງກັນ. ເປັນທີ່
ປະຈັກແຈ້ງແລ້ວວ່າ, ເນີນພູບາງໜ່ວຍກໍເໝາະທີ່ຈະຕາຍກັບ ໃນເວລາທີ່ເຮົາຢາກຢືນຢັດຢູ່ໃນທີ່ໝັ້ນຂອງເຮົາ, ແຕ່ທ່ານໂປໂລຊ່ວຍໃຫ້ເຮົາມອງເຫັນວ່າ ບ່ອນໃດທີ່ເຮົາຈະຂີດພົມແດນເຫຼົ່ານັ້ນ. ຄຳແນະນຳຂອງທ່ານໂປໂລນຳເຮົາໃຫ້ຮັກສາຄວາມສັມພັນອັນແໜ້ນແກ່ນເອົາໄວ້ ເຖິງແມ່ນວ່າຄວາມຄິດເຫັນນັ້ນແຕກຕ່າງກັນກໍຕາມ.

**ພຣະຄັມພີກ່າວວ່າແນວໃດ** : ( ເບິ່ງຕາມຂໍ້ 1, 2 ແລະ 3 )

## ການສຶກສາພຣະຄັມພີ

**1. <u>ໂຣມ14:14</u>.**

*1ສ່ວນຄົນອ່ອນແອໃນຄວາມເຊື່ອນັ້ນ ຈົ່ງຮັບເຂົາໄວ້ ແຕ່ບໍ່ໃຊ່ເພື່ອຖົກຖຽງກັນໃນເຣື່ອງຄວາມເຊື່ອທີ່ແຕກຕ່າງກັນ.*
*2ຄົນນຶ່ງຖືວ່າຈະກິນອັນໃດກໍໄດ້ໝົດ ແຕ່ຄົນທີ່ຍັງອ່ອນໃນຄວາມເຊື່ອກໍກິນແຕ່ຜັກເທົ່ານັ້ນ. 3ຢ່າໃຫ້ຄົນທີ່ກິນນັ້ນໝິ່ນ*
*ປມາດຄົນທີ່ບໍ່ກິນ ແລະຢ່າໃຫ້ຄົນທີ່ບໍ່ກິນກ່າວໂທດຄົນທີ່ກິນ ເພາະວ່າພຣະເຈົ້າໄດ້ຊົງໂຜດຮັບເອົາຜູ້ນັ້ນແລ້ວ. 4ເຈົ້າ*
*ນັ້ນແມ່ນໃຜຈຶ່ງກ່າວໂທດໃສ່ບ່າວຂອງຜູ້ອື່ນ ບ່າວນັ້ນຈະຕັ້ງຢູ່ຫຼືລົ້ມລົງກໍສຸດແລ້ວແຕ່ນາຍຂອງຕົນ ແລະລາວຄົງຈະ*
*ຕັ້ງຢູ່ເປັນແນ່ ດ້ວຍວ່າອົງພຣະຜູ້ເປັນເຈົ້າຊົງຣິດອາດໃຫ້ຜູ້ນັ້ນຕັ້ງໝັ້ນຢູ່ໄດ້.*

ທ່ານໂປໂລກ່າວເຖິງຄວາມສຳຄັນຂອງຄວາມສງົບສຸກຂອງຄວາມສັມພັນ-ບໍ່ພຽງແຕ່ຈັ້ງຢູ່ໂບດດຽວເທົ່ານັ້ນແຕ່ຈັ້ງຢູ່ດ້ວຍຄວາມກົມກຽວກັນຢ່າງແໜ້ນແຟ້ນ. ໂຣມ14 ຊີ້ແຈງເຖິງກຸ່ມຄົນທີ່ແຂ່ງດີແຂ່ງເດັ່ນກັນປາກົດຂຶ້ນໃນໂບດເພາະວ່າສະມາຊິກໄດ້ລວມກຳລັງກັນຕາມຄຳຊັກຊວນແລະຄວາມແຕກຕ່າງຂອງເຂົາ. ຜູ້ເຊື່ອກັບຖົກຖຽງກັນໃນເຣື່ອງມຸມ

ມອງຄວາມເຊື່ອທີ່ແຕກຕ່າງກັນ. ຄວາມແຕກແຍກນີ້ຜິດແລະອອກນອກເປົ້າໝາຍ, ໂດຍສະເພາະແມ່ນການໃຫ້ຂໍ້ມູນຄວາມຈິງທີ່ເຂົາຜິດຖຽງກັນເລື່ອງນະຍິກນະຍ່ອຍ. ເຂົາບໍ່ໄດ້ໂຕ້ຖຽງກັນເລື່ອງຂ່າວປະເສີດຫຼືການແບ່ງແຍກກັນເຖິງເລື່ອງວ່າພຣະເຢຊູໄດ້ຕາຍແທນຄວາມຜິດບາບຂອງເຂົາແທ້ບໍ່. ພວກເຂົາບໍ່ໄດ້ໂຕ້ຖຽງເຖິງທາງທີ່ມີປະສິດທິພາບທີ່ສຸດໃນການນຳຄົນໃນຄຸ້ມເຂດຂອງເຂົາໃຫ້ມາຫາພຣະຄຣິດ. ເຂົາຖົກຖຽງກັນໃນເລື່ອງອາຫານແລະງານລ້ຽງຕ່າງໆ.

| |
|---|
| ***ພວກເຮົາຄວນມີປະຕິກິຣິຍາຢ່າງໃດເວລາພວກເຮົາບໍ່ເຫັນພ້ອມໃນຖານະທີ່ເຮົາເປັນຜູ້ຕິດຕາມພຣະຄຣິດ?*** |

ພາຍລຸນມາ ທ່ານໂປໂລໄດ້ຍົກຄົນສອງກຸ່ມໃຫ້ເຫັນຄື: ກຸ່ມອ່ອນແອກວ່າແລະກຸ່ມແຂງແຮງກວ່າ (ໂຣມ15:1). ສິ່ງທີ່ເຮັດໃຫ້ກຸ່ມໃດນຶ່ງເຂັ້ມແຂງແມ່ນຄວາມເຕີບໃຫ່ຍຂອງເຂົາ; ພວກເຂົາເຂົ້າໃຈຖືກຕ້ອງໃນເລື່ອງເສຣີພາບຂອງຄຣິສຕຽນ. ຜູ້ຢູ່ໃນກຸ່ມ "ເຂັ້ມແຂງ" ກໍຍັງຢູ່ຫ່າງໄກຈາກຄວາມ ສົມບູນຢູ່, ແຕ່ເຂົາເຂົ້າໃຈວ່າຜູ້ໃດຄວນກິນຊີ້ນຫຼືກິນຜັກ ແລະມື້ໃດ ບຸກຄົນໃດຖືວ່າບໍຣິສຸດໂດຍບໍ່ໄດ້ຊີ້ເຖິງການບໍ່ເຊື່ອຟັງ ຫຼືບໍ່ມີຄວາມຮັກ ແລະບໍ່ໄດ້ອຸທິດຕົນແດ່ພຣະຄຣິດ. ແມ່ນໃຜເປັນຄົນຢູ່ໃນກຸ່ມ "ອ່ອນແອ"? ຄົນເຫຼົ່ານີ້ລວມດ້ວຍຄຣິສຕຽນທີ່ເຕີບໃຫ່ຍຂຶ້ນອາທິດແລ້ວອາທິດເຫຼົ່າກັບກົດເກນແລະພິທີກັມໃດນຶ່ງ ຊຶ່ງຝັງເລິກຢູ່ໃນຕົວເຂົາ.  ບາງພວກກໍມາຈາກຄົນນອກສາສນາມາກ່ອນແລະເຊື່ອວ່າຜັກທີ່ຂາຍຕາມຕລາດບໍ່ດີສຳລັບປຸງອາຫານ. ຄົນເຊື່ອພວກນີ້ກໍມີຄວາມພົ້ນສ່ຳກັນກັບພວກເຊື່ອ "ແຂງແຮງ." ພວກເຂົາອຸທິດຕົນເປັນຜູ້ຕິດຕາມພຣະເຢຊູ, ແຕ່ຈິດສຳນຶກຂອງເຂົາຈ່ອງດຶງເຂົາບໍ່ໃຫ້ໂອບກອດເອົາເສຣີພາບໃໝ່.

ຂນະດຽວກັນ ກຸ່ມໃດນຶ່ງຄວາມຄິດຂອງເຂົາອາດເຕີບໃຫ່ຍກວ່າ, ທັງສອງກຸ່ມສຳນຶກຜິດໃນຈິດວິນຍານທີ່ແຕກຕ່າງກັນ. ແທນທີ່ຈະເຮັດໃຫ້ຕ່າງຝ່າຍຕ່າງອ່ອນແຮງລົງ ແລະ ບໍ່ພໍໃຈກັບຕຳແໜ່ງທີ່ກຸ່ມອື່ນຈັດໃຫ້, ທ່ານໂປໂລທ້າທາຍພວກເຂົາໃຫ້ "ຍອມຮັບ" ຊຶ່ງກັນແລະກັນ. ການຍອມຮັບນຳໄປສູ່ຄວາມຄິດເຫັນການຍິນດີຕ້ອນຮັບຄົນອື່ນ ແລະໃຈເອື້ອເຟື້ອຕໍ່ເຂົາ. ໂລກນິຍາມການຍອມຮັບວ່າແມ່ນການຮັບຮອງຢ່າງເຕັມປ່ຽມ, ແມ້ກະທັ້ງຮັບຮອງ, ຄວາມເຊື່ອແລະການປະຕິບັດຂອງຄົນຜູ້ນັ້ນ.  ພຣະຄັມພີໃຊ້ຄຳວ່າຍອມຮັບບໍ່ໄດ້ໝາຍຄວາມວ່າບໍ່ເອົາໂທດບາບ. ແທນທີ່ຈະໝາຍຄວາມວ່າຢ່າງນັ້ນ, ມັນກັບເປັນຄວາມປາຖນາຢາກຢູ່ໃກ້, ທັ້ງໆທີ່ທັງສອງຝ່າຍມອງເຫັນຕ່າງກັນ.

ມັນສຳຄັນ ທີ່ຕ້ອງຈຳໃສ່ໃຈວ່າທ່ານໂປໂລໄດ້ເວົ້າກ່ຽວກັບເລື່ອງຖົກຖຽງກັນ-ສິ່ງເຫຼົ່ານັ້ນພຣະຄັມພີງຽບເສີຍ. ໃນໂຣມ14, ທ່ານໂປໂລໄດ້ຊີ້ແຈງບ່ອນທີ່ "ຄຸມເຄືອ" ໃນຊີວິດຄຣິສຕຽນ. ອີກຕື່ມໃນ ຂໍ້ 4, ເພິ່ນໄດ້ໃຫ້ຄວາມກະຈ່າງແຈ້ງວ່າພວກເຮົາແຕ່ລະຄົນຈະຕ້ອງໃຫ້ການຕໍ່ພຣະເຈົ້າໃນທຸກການກະທຳໃນຊີວິດຂອງຄຣິສຕຽນ. ພຣະເຈົ້າຈະບໍ່ຖາມຂ້າພະເຈົ້າວ່າຂ້າພະເຈົ້າຄິດຢ່າງໃດກ່ຽວກັບການກະທຳຂອງຄົນອື່ນ. ພຣະເຈົ້າເປັນອົງພຣະຜູ້ເປັນເຈົ້າຈະເປັນຜູ້ພິພາກສາຄົນອື່ນ. ບໍ່ແມ່ນຂ້າພະເຈົ້າ.

| |
|---|
| ***ມີການເສັຽຫາຍທີ່ບໍ່ໄດ້ຕັ້ງໃຈອັນໃດສາມາດເກີດຂຶ້ນເວລາເຮົາຕັດສິນກັນ?*** |

**2. <u>ໂຣມ 14:13-15</u>.**

*[13]ເຫດນັ້ນ ຢ່າໃຫ້ພວກເຮົາກ່າວໂທດໃສ່ກັນແລະກັນອີກຕໍ່ໄປ ແຕ່ວ່າ ຈົ່ງຕັ້ງໃຈເຮັດດັ່ງນີ້ດີກວ່າ ຄືຢ່າໄດ້ເອົາສິ່ງໃດ*
*ເປັນເຫດໃຫ້ຂູບສດຸດຫຼືລົ້ມລົງ ມາຂວາງທາງຂອງພີ່ນ້ອງ. [14]ເຮົາຮູ້ແລະເຊື່ອແນ່ໃນໃຈພຣະເຢຊູເຈົ້າວ່າ ບໍ່ມີສິ່ງນຶ່ງ*
*ສິ່ງໃດທີ່ເປັນຂອງຕ້ອງຫ້າມໃນຕົວມັນເອງ ແຕ່ວ່າ ຖ້າຜູ້ນຶ່ງຜູ້ໃດຖືວ່າສິ່ງໃດເປັນຂອງຕ້ອງຫ້າມ ມັນກໍເປັນຂອງຕ້ອງ*
*ຫ້າມສຳລັບຜູ້ນັ້ນແທ້. [15]ຖ້າພີ່ນ້ອງຂອງເຈົ້າເປັນທຸກໃຈເພາະອາຫານທີ່ເຈົ້າກິນເຈົ້າກໍບໍ່ໄດ້ປະຕິບັດໄປຕາມທາງແຫ່ງ*
*ຄວາມຮັກເສັຽແລ້ວ ພຣະຄຣິດຊົງສິ້ນພຣະຊົນເພື່ອຜູ້ໃດ ກໍຢ່າໃຫ້ຜູ້ນັ້ນຈິບຫາຍເພາະອາຫານທີ່ເຈົ້າກິນນັ້ນ.*

ກຸ່ມ"ແຂງແຮງ" ກວ່າ ມີຄວາມເຂົ້າໃຈເຣື່ອງເສຣີພາບຢ່າງຜູ້ໃຫຍ່ກວ່າ, ແຕ່ ທ່ານໂປໂລຍັງທ້າທາຍຜູ້ເຊື່ອເຫຼົ່ານີ້ ບໍ່ໃຫ້ກ່າວໂດຍບໍ່ຄຳນຶງເຖິງຜູ້ອື່ນ ໂດຍອວດອ້າງເສຣີພາບຂອງເຂົາ. ເຂົາຕ້ອງຫຼີກລ້ຽງການກ່າວໂທດໃສ່ກັນ. ຖ້າປາສຈາກການນັບຖືຈາກຄົນອື່ນ, ຄຣິສຕຽນທີ່ເຕີບໃຫຍ່ແລ້ວຈະຈຳກັດເສຣີພາບຂອງເຂົາ, ຈົ່ງເລີກສິ່ງໃດສິ່ງນຶ່ງອອກຈາກຊີວິດຂອງເຂົາ, ທີ່ອາດເປັນເຫດໃຫ້ຄົນອື່ນເຈັບຊ້ຳນ້ຳໃຈໃນຈິດສຳນຶກຂອງເຂົາ. ຄວາມສັມພັນສ່ວນຕົວອາດກວມກິນແຕ່ມເສຣີພາບຂອງຕົນເອງ. ຜູ້ແຂງແຮງຄວນມຸ້ງໜ້າເຂົ້າຫາຄົນອ່ອນແອ.

ຊີໂມນເປັນຄົນສລາດສ່ອງໃສ, ເປັນຜູ້ນຳນະມັສການໜຸ່ມຜູ້ນຶ່ງ. ຕອນຮຽນຢູ່ອຸດົມ, ລາວຖືກເອີ້ນໃຫ້ເປັນຜູ້ນຳດົນຕຣີໃນການນະມັສການທີ່ວິຫານ ແລະທີ່ໂບດອ້ອມຂ້າງເລື້ອຍໆ. ວັນທິດນຶ່ງ, ລາວໄດ້ຮັບເຊີນໃຫ້ນຳວົງດົນຕຣີຂອງລາວແລະນຳດົນຕຣີໃນໂບດເກົ່າແກ່ແຫ່ງນຶ່ງ. ສິດຍາພິບານເປັນຄົນໃຈດີແລະໜ້ານັບຖື, ແຕ່ ເພິ່ນໄດ້ຂໍຮ້ອງໃຫ້ຊີໂມນໃສ່ຊຸດເສື້ອແວັດແລະຜູກກາຣະວັດ, ເປັນເຄື່ອງແຕ່ງກາຍປົກກະຕິຂອງຜູ້ນຳໂບດເຂົາ. ຊີໂມນຮູ້ສຶກວ່າເຂົາດູຖູກຕົນ ຈຶ່ງວາງສາຍແລະແປກໃຈວ່າ: "ເປັນຫຍັງໂບດນີ້ຈຶ່ງຈຳນຳເຣື່ອງເຄື່ອງນຸ່ງຊົ່ງບໍ່ມີໃນຂໍ້ພຣະຄັມພີ? ເປັນຫຍັງເຂົາຈຶ່ງບໍ່ຍອມຮັບໃນສະພາບທີ່ຂ້ອຍເປັນຢູ່? ຊີໂມນຕັດສິນໃຈຂນະອາຣົມຮ້ອນແຮງ. ລາວປະຕິເສດຄຳຂໍຮ້ອງຂອງສິດຍາພິບານແລະມາໂບດໃນວັນທິດດ້ວຍໂສ້ງຢີນທີ່ຕົກສີແລະເສື້ອຍືດທີ່ລາວມັກທີ່ສຸດ. ນິສັຍຂອງລາວເປັນແບບນີ້? "ຄົນພວກນັ້ນຄວນເຊົາໄດ້ແລ້ວ." ມັນເປັນການງ່າຍທີ່ຈະຕົກຫຼົ່ມໃນຄວາມເຫັນແກ່ຕົວຂອງຊີໂມນ, ຄວາມຄິດທີ່ເຫັນແກ່ຕົວ. ມັນຄືກັນກັບທ່ານ-ຄືກັນກັບຂ້າພະເຈົ້າ- ເໝືອນພຍາຍາມຕຳໜິການປະພຶດຂອງທ່ານຈຸດໃດຈຸດນຶ່ງໂດຍກ່າວວ່າ, "ຄົນພວກນັ້ນພໍເຊົາໄດ້ແລ້ວ." ແຕ່ວ່າມັນສມອງແບບນີ້ບໍ່ໄດ້ເສີມສ້າງຄວາມສັມພັນໃຫ້ມີສຸຂພາບດີຂຶ້ນ. ຍິ່ງໄປກວ່ານັ້ນ, ການເຮັດໃຫ້ອ້າຍເອື້ອຍນ້ອງຂອງທ່ານໃນພຣະຄຣິດເສັຽໃຈກັບເຫດຜົນທີ່ບໍ່ດີກໍເປັນການຜິດ.

ພວກເຮົາຕ້ອງມີທັສນະຄະຕິທີ່ກົງກັນຂ້າມ. ເມື່ອໃດກໍຕາມທີ່ເຮົາສຳນຶກເຖິງຄວາມນຶກຄິດຂອງຄົນອື່ນ ຄືກັບວ່າເຮົາປັບເຂົາມາໃສ່ຊີວິດເຮົາ, ພວກເຮົາກຳລັງສະແດງຄວາມເຕີບໃຫຍ່ຫຼາຍກວ່າການປະນີປະນອມ.

| |
|---|
| ***ທ່ານຈະຊັ່ງຊາການໃຊ້ເສຣີພາບຂອງທ່ານແລະຫຼີກລ້ຽງການຊູນສະດຸດຢ່າງໃດ?*** |

**3.<u>ໂຣມ 14:16-19</u>.**

*[16]ສັນນັ້ນ ຢ່າໃຫ້ການທີ່ເຈົ້າຖືວ່າດີນັ້ນ ເປັນຂໍ້ທີ່ຄົນອື່ນຕິຕຽນໄດ້. ເພາະວ່າຣາຊອານາຈັກຂອງພຣະເຈົ້າບໍ່ໝາຍເຖິງ*
*ການກິນແລະການດື່ມ, [17]ແຕ່ໝາຍເຖິງຄວາມຊອບທັມແລະສັນຕິສຸກ ກັບຄວາມຊົມຊື່ນຍິນດີທີ່ມາຈາກພຣະວິນຍານ*
*ບໍຣິສຸດ. [18]ຜູ້ທີ່ບົວຣະບັດພຣະຄຣິດໃນການເຫຼົ່ານັ້ນ ກໍເປັນທີ່ພໍພຣະທັຍພຣະເຈົ້າ ແລະເປັນທີ່ຊອບໃຈມະນຸດດ້ວຍ.*
*[19]ເຫດດັ່ງນີ້ພວກເຮົາຈົ່ງສແວງຫາສິ່ງທັງຫຼາຍທີ່ເຮັດໃຫ້ເກີດຄວາມສງົບສຸກແລະເຮັດໃຫ້ເກີດຄວາມຈະເຣີນແກ່ກັນ*
*ແລະກັນ.*

ສິ່ງສຳຄັນທີ່ສຸດໃນຊີວິດບໍ່ແມ່ນຊີ້ນຫຼືຜັກ! ແຕ່ພວກເຮົາຕ້ອງກິນເພື່ອຢູ່ ບໍ່ແມ່ນຢູ່ເພື່ອກິນ. ດັ່ງນັ້ນແມ່ນຫຍັງຄືເປົ້າໝາຍໃຫຍ່ຂອງພວກເຮົາ?

- ພວກເຮົາຢູ່ເພື່ອເຮັດໃຫ້ອານາຈັກຂອງພຣະເຈົ້າແລະພຣະສະງ່າຣາສີຂອງພຣະອົງເປັນທີ່ຮູ້ຈັກທົ່ວທັງໂລກ.
- ພວກເຮົາຢູ່ເພື່ອສ້າງອານາຈັກຂອງພຣະອົງແລະສົ່ງເສີມພຣະປະສົງຂອງພຣະອົງ.
- ພວກເຮົາຢູ່ເພື່ອຈະໄດ້ເຫັນພຣະຜູ້ໂຜດຂອງເຮົາກັບມາດ້ວຍຣິດອຳນາດແລະສະງ່າຣາສີ, ຊີວິດເຮົາຕຽມພ້ອມແລະພ້ອມແລ້ວທີ່ຈະຮັບໃຊ້.

ພວກເຮົາຮັບໃຊ້ພຣະຄຣິດໃນເມື່ອເຮົາໃຫ້ສັດສ່ວນພໍເໝາະພໍງາມແກ່ສິ່ງເລັກໆນ້ອຍໆ ແລະ ຮັກສາຈຸດມຸ່ງໝາຍຂອງ

ພຣະຄຣິດໃນພາບພົດເຕັມສ່ວນໄວ້, ປະຕິເສດການ "ຖືເຣື່ອງເລັກໆນ້ອຍໆເປັນເຣື່ອງໃຫ່ງ." ໃນທາງປະຕິບັດນັ້ນ, ພວກເຮົານຶກສເມີວ່າໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ ແລະ ຊື່ນຊົມຍິນດີນຳຄວາມຈະເຣີນເຕີບໃຫຍ່ຂອງຄວາມສັມພັນ.

ພວກເຮົາໄດ້ຮັບການຊົງຮຽກເອີ້ນໃຫ້ຖືບັດຄົນຮັບໃຊ້. ອີກເທື່ອນຶ່ງ, ພວກເຮົາເວົ້າເຖິງການຖືພັກຖືພວກແລະຄວາມແຕກຕ່າງທາງດ້ານຄວາມຄິດເຫັນ. ແນ່ນອນ, ເວລາໃດເວລານຶ່ງຕ້ອງແດງຂຶ້ນມາເມື່ອພວກເຮົາເຫັນສີລທັມແຈ່ມແຈ້ງ ແລະຢືນຢູ່ໃນພຣະທັມ, ແລະການຢືນຢັດນັ້ນຈະກໍ່ໃຫ້ເກີດການແຕກແຍກ. ເມື່ອນັ້ນ, ເຖິງຢ່າງໃດກໍຕາມ, ພວກເຮົາຕ້ອງຢືນສູ້ເພື່ອຄວາມຈິງໃນທາງແຫ່ງຄວາມຮັກ, ດ້ວຍຄວາມເປັນອັນນຶ່ງອັນດຽວກັນໃນຄວາມຄິດ.

ເວລາຜູ້ໃດຜູ້ນຶ່ງບໍ່ເຫັນພ້ອມນຳເຮົາ, ຫຼືຕໍ່ຕ້ານເຮົາ ໂດຍທັມຊາດຂອງເຮົາແລ້ວ ເຮົາມັກແລ່ນໜີປະບຸກຄົນນັ້ນ, ເຮັດຝາປ້ອງກັນໄວ້, ຫຼືຢູ່ຫ່າງໆ. ໃນບາງກໍລະນີ ເຂດແດນນີ້ພວກເຮົາກໍຕ້ອງການຢູ່, ແຕ່ ຄຳຕອບຂອງຄຣິສຕຽນທີ່ສົມບູນທີ່ສຸດແມ່ນຮັກສາຄວາມສັມພັນເອົາໄວ້. ພວກເຮົາຖືກເອີ້ນມາໃຫ້ຕິດສນິດກັບມັນແລະຮັບໃຊ້ຄົນທີ່ພຣະເຈົ້າໄດ້ຈັດວາງໄວ້ອ້ອມຂ້າງເຮົາ. ພຣະທັມບັງຂັບເຮົາໃຫ້ເຮັດສ່ວນຂອງເຮົາເພື່ອຮັກສາຄວາມສັມພັນເອົາໄວ້. ຣາຊອານາຈັກສວັນຄື "ຄວາມຊອບທັມ, ສັນຕິສຸກ, ແລະຄວາມຍິນດີໃນພຣະວິນຍານບໍຣິສຸດ." ຂໍໃຫ້ເຮົາສົ່ງເສີມສິ່ງນີ້ໃນຊີວິດຄອບຄົວ ແລະໂບດຂອງເຮົາ ແລະບໍ່ລົ້ມເລີກຄວາມຫວັງຂອງການປິ່ນປົວຮັກສາ.

> *ການຮັບໃຊ້ພຣະຄຣິດໃນທາງນີ້ປ່ຽນການຫຍັບເຂົ້າໄກ້ຄວາມບໍ່ເຫັນພ້ອມຢ່າງໃດ?*

**ນຳໃຊ້ໃນຊີວິດ**

ທ່ານຈະເຮັດຫຍັງເພື່ອສ້າງຄວາມສັມພັນທັ້ງໆທີ່ມີຄວາມແຕກຕ່າງໃນຄວາມຄິດເຫັນ? ຈົ່ງເລືອກການນຳໃຊ້ອັນນຶ່ງຕໍ່ລົງໄປນີ້:

- **ຍື່ນພຣະຄຸນໃຫ້.** ຖ້າຜູ້ໃດຜູ້ນຶ່ງຕໍ່ຕ້ານທ່ານເພາະການກະທຳຂອງເຂົາຂັດກັບຄວາມເຊື່ອໝັ້ນຂອງທ່ານ, ຈົ່ງໃຫ້ອະພັຍ. ຢ່າຮັກສາການກະທຳນີ້ໄວ້ເທິງຫົວເຂົາອີກຕໍ່ໄປ.
- **ປ່ອຍໄປ.** ທ່ານອາດຮູ້ສຶກມີອິສຣະພາບຢ່າງສົມບູນໃນພຣະຄຣິດເພື່ອເຂົ້າຮ່ວມກິຈກັມບາງຢ່າງ, ແຕ່ຄົນອື່ນບໍ່ຮູ້ສຶກມີອິສຣະພາບ. ຈົ່ງປ່ອຍປະເສຣີພາບຂອງທ່ານໄປເພື່ອຈະໄດ້ເຂົ້າຮ່ວມກິຈກັມ ແລະໄດ້ສະແດງຄວາມນັບຖືແລະຮັບໃຊ້ຄົນອື່ນ.
- **ເຫັນພ້ອມກັບການບໍ່ເຫັນພ້ອມ.** ຈົ່ງຄົບກັບຄົນທີ່ທ່ານມີຄວາມຄິດເຫັນຕ່າງ. ມັນອາດຊ່ອຍໄດ້ຖ້າທ່ານໄດ້ສື່ສານແຕ່ລະຄົນວ່າ ເປັນຫຍັງທ່ານຈຶ່ງເກັບຄວາມຮູ້ສຶກຜິດໄວ້; ໃນບັ້ນທ້າຍ,ເຖິງຢ່າງໃດ, ທ່ານກໍຍັງຕ້ອງເລືອກທີ່ຈະເຫັນພ້ອມກັບຄົນທີ່ບໍ່ເຫັນພ້ອມ. ຈົ່ງຮັກສາຄວາມຮັກແລະຄວາມນັບຖືຄົນອື່ນ ແມ້ວ່າມີຄວາມແຕກຕ່າງກັນ.

ຄວາມສັມພັນກໍສຳຄັນກວ່າຄວາມຄິດເຫັນບໍ່ແມ່ນບໍ່. ຈົ່ງຮັກພຣະຄຣິດໂດຍການຮັກຄົນອື່ນຍິ່ງກວ່າທ່ານຮັກສິດແລະຄວາມເຫັນຂອງທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**